**ບົດຖະແຫຼງຂ່າວ**

**ຂອງຄະນະສະເພາະກິດ ເພື່ອປ້ອງກັນ ຄວບຄຸມ ແລະ ແກ້ໄຂ ພະຍາດອັກເສບປອດທີ່ເກີດ**

**ຈາກເຊື້ອຈຸລະໂລກສາຍພັນໃໝ່ COVID-19**

**ປະຈໍາວັນຈັນ ວັນທີ 27 ກັນຍາ ປີ 2021**

ສະບາຍດີ ບັນດາທ່ານທີ່ກໍາລັງຕິດຕາມຮັບຊົມ ແລະ ຮັບຟັງ ການຖ່າຍທອດສົດຖະແຫຼງຂ່າວ ຂອງຄະນະສະເພາະກິດ **ປະຈໍາວັນຈັນ ວັນທີ 27 ກັນຍາ ປີ 2021**.

ຂ້າພະເຈົ້າ ດຣ. ຣັດຕະນະໄຊ ເພັດສຸວັນ ຫົວໜ້າກົມຄວບຄຸມພະຍາດຕິດຕໍ່, ກະຊວງ ສາທາລະນະສຸກ **ຈະລາຍງານ ກ່ຽວກັບ ສະພາບການລະບາດຂອງພະຍາດໂຄວິດ-19 ປະຈໍາວັນ ໃນ ສປປ ລາວ ແລະ ໃນໂລກ.**

**ຕໍ່ໄປ ຂ້າພະເຈົ້າ ຂໍລາຍງານ:**

❖ **ສະພາບການລະບາດພະຍາດໂຄວິດ-19 ຢູ່ ສປປ ລາວ, ມາຮອດວັນທີ 26 ກັນຍາ 2021:**

ໄດ້ກວດວິເຄາະທັງໝົດ **6,066** ຄົນ, ໃນນັ້ນ ກວດພົບຜູ້ຕິດເຊື້ອໃໝ່ ທັງໝົດ **622** ຄົນ:

- **ກໍລະນີນໍາເຂົ້າ ມີ 12 ຄົນ** ຈາກ ແຂວງ ສະຫວັນນະເຂດ 7 ຄົນ, ຄໍາມ່ວນ 3 ຄົນ, ສາລະວັນ 1 ຄົນ ແລະ ຈໍາປາສັກ 1 ຄົນ.

- **ສໍາລັບ ການຕິດເຊື້ອໃນຊຸມຊົນ ມີ 610 ຄົນ ລາຍລະອຽດ ດັ່ງຕໍ່ໄປນີ້:**

1. **ນະຄອນຫຼວງ 315 ຄົນ, ລາຍລະອຽດມີດັ່ງນີ້:**

    ○ ເມືອງນາຊາຍທອງ 9 ຄົນ

- ຈຸດເກັບຕົວຢ່າງບຶງຂະຫຍອງ 12 ຄົນ
- ມສ ເຈົ້າອານຸວົງ 6 ຄົນ
- ມສ ລາວຫວຽດ 3 ຄົນ
- ສະຖາບັນປັດສະເຕີ້ລາວ 11 ຄົນ
    - ເມືອງນາຊາຍທອງ, ບ້ານປາກແຮດ 6 ຄົນ
    - ເມືອງຈັນທະບູລີ, ບ້ານຫ້ວຍຫົງ 2 ຄົນ
    - ໂຮງງານຕັດຫຍິບກຽນວິໄລ 3 ຄົນ
- ໂຮງງານອານພິລາວ 54 ຄົນ
- ສູນຫຼັກ 27 ມີ 26 ຄົນ (ສຳຜັດໃກ້ຊິດກັບໂຮງງານອານພິລາວ)
- ຈຸດເກັບຕົວຢ່າງສີເກີດ 60 ຄົນ

- ເມືອງໄຊທານີ 14 ຄົນ
- ເຫຼືອນັ້ນ ທີມງານກຳລັງເກັບກຳຂໍ້ມູນລະອຽດ ຈະລາຍງານໃຫ້ບັນດາທ່ານຊາບຕື່ມພາຍຫຼັງ

2. **ຄຳມ່ວນ 152 ຄົນ:** ມາຈາກກຳມະກອນບໍລິສັດ ຄ້າຍປວນ (ໃນນັ້ນ ເກືອບ 90 ເປີເຊັນ ແມ່ນ ກຳມະກອນຄົນລາວ)

3. **ຈຳປາສັກ 59 ຄົນ:**

- ປາກເຊ 38 ຄົນ, ບາຈຽງ 10 ຄົນ, ປະທຸມພອນ 10 ຄົນ (ທະຫານ 5 ຄົນ) ແລະ ຊະນະສົມບູນ 1 ຄົນ
- ເມືອງໂຂງ 1 ຄົນ (ແຮງງານຢູ່ສູນເມືອງ)

4. **ຫຼວງພະບາງ 35 ຄົນ:** ເມືອງງອຍ 17 ຄົນ, ນໍ້າບາກ 14 ຄົນ, ນານ 3 ຄົນ ແລະ ຈອມເພັດ 1 ຄົນ

5. **ແຂວງວຽງຈັນ 13 ຄົນ:**

- ເມືອງໂພນໂຮງ ມີ 12 ກໍລະນີ, ຊຶ່ງທັງໝົດ ແມ່ນມີປະຫວັດສໍາຜັດໃກ້ຊິດກັບ ກໍລະນີຕິດເຊື້ອຜ່ານມາ ໂດຍສະເພາະ ຮ່ວມງານເຮືອນດີ
- ບ້ານນາຊູ ມີ 05 ກໍລະນີ
- ວັດບ້ານນາຊູ ມີ 01 ກໍລະນີ
- ບ້ານໂພນຂາມ 2 ກໍລະນີ ແລະ ບ້ານໂພນໂຮງ 02 ກໍລະນີ
- ບ້ານນາໂພເໜືອ 01 ກໍລະນີ ແລະ ບ້ານສ້າງໃຫ່ຍ 01 ກໍລະນີ
- ເມືອງທຸລະຄົມ ມີ 01 ກໍລະນີ (ບ້ານໂພນແຮ່)

6. **ບໍ່ແກ້ວ 11 ຄົນ:** ບ້ານ ພຽງງາມ 09 ຄົນ, ບ້ານຄວ້ານ 01 ຄົນ ເມືອງຕົ້ນເຜີ້ງ ແລະ ເຂດເສດຖະກິດພິເສດ 01 ຄົນ

7. **ບໍລິຄໍາໄຊ 7 ຄົນ:**

   - ບ້ານໂພນຈະເລີນ, ເມືອງປາກກະດິງ ມີ 07 ກໍລະນີ, ທັງໝົດເຮັດວຽກຢູ່ເຂື່ອນໄຟຟ້ານໍ້າເທີນ 1 ແລະ ພັກຢູ່ຫໍພັກຂອງເຂື່ອນດັ່ງກ່າວ (ອາຊີບເປັນແມ່ຄົວ ມີ 02 ກໍລະນີ, ສັນຊາດ ລາວ 01, ແລະ ສັນຊາດ ຈີນ 01 ຄົນ); ກໍາມະກອນມີ 05 ກໍລະນີ (ສັນຊາດ ລາວ 01 ຄົນ; ແລະ ສັນຊາດ ຈີນ 04 ຄົນ)

8. **ສາລະວັນ 7 ຄົນ**

9. **ສະຫວັນນະເຂດ 5 ຄົນ:**

- ພະນັກງານເອຄອນ ມີ 02 ກໍລະນີ; ບ້ານໂພນທັນ, ເມືອງໄຊບູລີ ແລະ ບ້ານຍາງສູງ, ນະຄອນໄກສອນ
- ບ້ານແກ້ງຢາງ, ເມືອງເຊໂປນ ມີ 02 ກໍລະນີ, ທັງສອງຄົນອາຊີບເປັນຊີບປີ້ງ, ແລ່ນເອກະສານຢູ່ແດນສະຫວັນ
- ບ້ານວິງພັນສີ, ເມືອງອຸທຸມພອນ ມີ 01 ກໍລະນີ, ຊຶ່ງພົວພັນກັບຜູ້ຕິດເຊື້ອຢູ່ບ້ານດຽວກັນໃນໄລຍະຜ່ານມາ ແລະ ໄດ້ລາຍງານໃນວັນທີ 23 ກັນຍາ 2021.

**10. ໄຊສົມບູນ 3 ຄົນ:**

- ບ້ານຊຽງຄົງ, ເມືອງທ່າໂທມ ມີ 02 ກໍລະນີ (ເປັນສາມີ-ພັນລະຍາ) ໄດ້ ໄປສິ່ງສະການພໍ່ຕູ້ຢູ່ບ້ານຖໍ້າດິນ, ເມືອງລ້ອງຊານ ແລະ ໄດ້ສໍາຜັດໃກ້ຊິດກັບ ກໍລະນີຕິດເຊື້ອຢູ່ງານເຮືອນດີ ທີ່ໄດ້ລາຍງານໃນວັນທີ 25 ກັນຍາ 2021
- ບ້ານວັງໄຮ່, ເມືອງທ່າໂທມ ມີ 01 ກໍລະນີ ໄດ້ ໄດ້ສໍາຜັດໃກ້ຊິດກັບ ກໍລະນີຕິດເຊື້ອ (ເປັນໝູ່ ເຮັດວຽກຢູ່ໂຮງງານອານພິລາວ)

11. **ຫລວງນໍ້າທາ 3 ຄົນ:** ຄົນລາວ 1 ຄົນ ແລະ ຄົນຈີນ 2 ຄົນ (ມາຈາກ ເມືອງຕົ້ນເຜີ້ງ, ແຂວງບໍ່ແກ້ວ)

- ປະຈຸບັນ ຜູ້ຕິດເຊື້ອໃໝ່ທັງໝົດ ໄດ້ເຂົ້ານອນແຍກປ່ຽວ ແລະ ຮັບການປິ່ນປົວຢູ່ສະຖານທີ່ປິ່ນປົວທີ່ຖືກກຳນົດໄວ້.

- ມາຮອດມື້ນີ້ ພວກເຮົາມີຕົວເລກຜູ້ຕິດເຊື້ອສະສົມທັງໝົດ **22,441 ຄົນ**, ເສຍຊີວິດສະສົມ **16** ຄົນ ແລະ ຄົນເຈັບກຳລັງປິ່ນປົວ ທັງໝົດ **5,271** ຄົນ.

- ປັດຈຸບັນແຂວງຕ່າງໆມີບ້ານແດງ ດັ່ງນີ້:
  - **ນະຄອນຫຼວງວຽງຈັນ** ມີ 95 ບ້ານ ໃນ 8 ເມືອງ
  - **ຄຳມ່ວນ** ມີ 55 ບ້ານ ໃນ 6 ເມືອງ
  - **ຈຳປາສັກ** ມີ 39 ບ້ານໃນ 6 ເມືອງ

- **ສະຫວັນນະເຂດ** ມີ 21 ບ້ານ ໃນ 5 ເມືອງ

- **ແຂວງວຽງຈັນ** 13 ບ້ານ ໃນ 4 ເມືອງ

- **ຫຼວງພະບາງ** 7 ບ້ານ ໃນ 3 ເມືອງ

- **ສາລະວັນ** 5 ບ້ານ ໃນ 2 ເມືອງ

- **ບໍ່ແກ້ວ** 3 ບ້ານໃນ 1 ເມືອງ

- **ບໍລິຄໍາໄຊ** 2 ບ້ານ ໃນ 1 ເມືອງ

- **ຊຽງຂວາງ** 1 ບ້ານໃນ 1 ເມືອງ

- **ໄຊສົມບູນ** 1 ບ້ານ ໃນ 1 ເມືອງ

- <u>ບ້ານໃໝ່ທີ່ກຳນົດເປັນເຂດແດງ</u> **ໃນນະຄອນຫຼວງວຽງຈັນ ມີ 12 ບ້ານ ໃນ 6 ເມືອງ:**

  - ເມືອງໄຊເສດຖາ: ບ້ານໂນນສະຫວັນ
  - ເມືອງສີສັດຕະນາກ: ບ້ານສະພານທອງເໜືອ
  - ເມືອງສີໂຄດຕະບອງ: ບ້ານຈຳປາ ແລະ ໜອງໜ້ຽວ
  - ເມືອງນາຊາຍທອງ: ບ້ານນ້ຳກ້ຽງ, ເປີກ, ນ້ຳຫຸມ, ຫຸມແບ່ງ, ນາຊັບ, ບ້ານອີໄລໃຕ້
  - ເມືອງໄຊທານີ: ບ້ານສີວິໄລ
  - ເມືອງຫາດຊາຍຟອງ: ບ້ານກາງ

- <u>ບ້ານໃໝ່ທີ່ກຳນົດເປັນເຂດແດງ</u> ໃນແຂວງສະຫັວນນະເຂດ ມີ 2 ບ້ານ ໃນ 2 ເມືອງ: ນະຄອນໄກສອນ: ບ້ານໂພໄຊ ແລະ ເມືອງ ອຸທຸມພອນ: ບ້ານ ຈະເລີນສຸກ
- **ຜູ້ທີ່ມີຈຸດປະສົງຢາກກວດຊອກຫາເຊື້ອໂຄວິດ-19** ສຳລັບ **ນະຄອນຫຼວງວຽງຈັນ ແມ່ນມີ:**
  - **ຈຸດເກັບຕົວຢ່າງຄົງທີ່** ປະກອບມີ:
    - ຈຸດເກັບຕົວຢ່າງ ສະໜາມກິລາໃນຮົ່ມ ບຶງຂະຫຍອງ
    - ຈຸດເກັບຕົວຢ່າງ ໂຮງຮຽນ ມສ ລາວ-ຫວຽດ, ເມືອງໄຊເສດຖາ
    - ຈຸດເກັບຕົວຢ່າງ ມສ ເຈົ້າອະນຸວົງ, ເມືອງ ຈັນທະບູລີ
    - ສາຂາເມືອງນາຊາຍທອງ (ຢູ່ ບ້ານ ຫ້ວຍນ້ຳເຢັນ ຮອດວັນພຸດ)
    - ນອກຈາກນີ້ ຍັງມີບັນດາໂຮງໝໍສູນກາງ

○ **ທີມເກັບຕົວຢ່າງເຄື່ອນທີ່:**

- ທີມເຄື່ອນທີ່ຂອງ ເມືອງ ໄຊທານີ ເຄື່ອນທີ່ຕາມຈຸດທີ່ມີການລະບາດ ພາຍໃນ ເມືອງ,
- ເມືອງ ສີສັດຕະນາກ ທີມເຄື່ອນທີ່ຕາມຈຸດທີ່ມີການລະບາດ
- ເມືອງນາຊາຍທອງ ມີທີມເຄື່ອນໄປເກັບຕາມສູນຈຳກັດບໍລິເວນພາຍໃນເມືອງ ຕື່ມອີກ,
- ເມືອງສີໂຄດຕະບອງ ມີທີມເຄື່ອນທີ່ໄປຕາມເຂດທີ່ມີການລະບາເຊັ່ນກັນ
- ທີມເຄື່ອນທີ່ຂອງ ນະຄອນຫຼວງ 2 ທີມ ເຄື່ອນທີໄປຊ່ວຍທຸກເມືອງເກັບຕົວ ຢ່າງຢູ່ບ່ອນທີ່ມີການລະບາດ

  - ທຸກທີມແມ່ນໃຫ້ບໍລິການບັນດາທ່ານທຸກວັນຕອນເຊົ້າ 9:00–11:30 ໂມງ (ວັນຈັນ ຫາ ວັນອາທິດ) ແລະ ຍັງມີທີມງານເກັບຕົວຢ່າງເຄື່ອນທີ່ໄປເກັບໃນສະຖານທີ່ທີ່ມີການລາຍງານຄົນຕິດເຊື້ອ.

- ສໍາລັບບັນດາແຂວງ ແມ່ນທ່ານສາມາດໄປກວດຊອກຫາເຊື້ອໄດ້ຢູ່ໂຮງໝໍແຂວງ ຫຼື ສະຖານທີ່ທີ່ກໍານົດໄວ້ ຫຼື ທີມງານໜ່ວຍເຄື່ອນທີ່ ທີ່ລົງເກັບຕົວຢ່າງ ໃນເຂດທີ່ມີການລະບາດໃນຊຸມຊົນ.

## ➢ ການເຝົ້າລະວັງຢູ່ຕາມຈຸດຜ່ານແດນ ໃນຂອບເຂດທົ່ວປະເທດ

- ວັນທີ 26 ກັນຍາ 2021 ມີຜູ້ເດີນທາງເຂົ້າຕາມດ່ານຕ່າງໆໃນ ສປປ ລາວ ຈໍານວນ ທັງໝົດ **730** ຄົນ.

- ປັດຈຸບັນ ທົ່ວປະເທດມີສູນຈຳກັດບໍລິເວນທີ່ຍັງເປີດຢູ່ **118** ສູນ ແລະ **55** ໂຮງແຮມ, ມີຜູ້ຈຳກັດບໍລິເວນ **8,452** ຄົນ.

➢ **ຕໍ່ໄປນີ້ ຂ້າພະເຈົ້າຂໍລາຍງານສະພາບການຕິດເຊື້ອໃນທົ່ວໂລກ:**

- ປັດຈຸບັນ ທົ່ວໂລກມີລາຍງານຜູ້ຕິດເຊື້ອສະສົມທັງໝົດ ກໍລະນີຢັ້ງຢືນຕິດເຊື້ອທັງໝົດ 232,576,506 (322,541 ໃໝ່), ເສຍຊີວິດທັງໝົດ 4,761,482 (4,852 ໃໝ່), ປິ່ນປົວຫາຍດີ 209,190,907 (329,003 ໃໝ່). ສຳລັບ 3 ອັນດັບ ປະເທດທີ່ມີຜູ້ຕິດເຊື້ອ ແລະ ເສຍຊີວິດຫຼາຍກວ່າໝູ່ໃນໂລກ ກໍ່ຍັງແມ່ນ **ສະຫະລັດອາເມລິກາ**, **ອິນເດຍ** ແລະ **ບຣາຊິວ**.

➢ **ບັນດາປະເທດທີ່ມີຊາຍແດນຕິດຈອດກັບ ສປປ ລາວ:**

ປະເທດທີ່ລາຍງານຜູ້ຕິດເຊື້ອຫຼາຍກ່ວາໝູ່ແມ່ນ **ປະເທດໄທ** ເຊິ່ງມີຜູ້ຕິດເຊື້ອໃໝ່ **12,353** ຄົນ ແລະ ເສຍຊີວິດໃນມື້ດຽວ **125** ຄົນ. ຮອງລົງມາແມ່ນ **ສສ ຫວຽດນາມ** ມີລາຍງານຜູ້ຕິດເຊື້ອໃໝ່ **10,011** ຄົນ ແລະ ເສຍຊີວິດໃນມື້ດຽວ **184** ຄົນ.

- **ບັນດາທ່ານທີ່ນັບຖື ແລະ ຮັກແພງທັງຫຼາຍ**
  - ປັດຈຸບັນ ສະພາບການລະບາດຂອງພະຍາດໂຄວິດ-19 ຢູ່ ສປປລາວ ເຫັນວ່າ ການຕິດເຊື້ອໃນຊຸມຊົນເພີ່ມຂຶ້ນຢ່າງຕໍ່ເນື່ອງໃນແຕ່ລະວັນ ໝາຍວ່າ ທຸກຄົນ ແມ່ນມີຄວາມສ່ຽງສູງ ແລະ ສາມາດຕິດເຊື້ອພະຍາດນີ້ໄດ້ທຸກເວລາ ຖ້າຫາກບັນດາທ່ານຍັງບໍ່ປະຕິບັດຕາມແຈ້ງການຂອງຄະນະສະເພາະກິດຂັ້ນຕ່າງໆ ວາງອອກເຊັ່ນ: ຫ້າມບໍ່ໃຫ້ອອກຈາກເຮືອນ, ຫ້າມຊຸມແຊວກັນເປັນກຸ່ມ... ;

- ຖ້າຫາກທ່ານ ຮູ້ວ່າ ທ່ານຢູ່ໃນກຸ່ມສ່ຽງ ຫຼື ເປັນກຸ່ມສຳພັດໃກ້ຊິດກັບຜູ້ທີ່ຕິດເຊື້ອ ໃຫ້ທ່ານແຍກໂຕເອງອອກຈາກຄົນອ້ອມຂ້າງທັນທີ ພ້ອມທັງ ຮີບຮ້ອນໄປກວດຫາເຊື້ອ, ໃນໄລຍະລໍຖ້າຜົນກວດ ຫຼື ຜົນກວດອອກມາວ່າ ທ່ານຕິດເຊື້ອ ກໍ່ຂໍໃຫ້ທ່ານມີຄວາມທຸ່ນທ່ຽງ, ສະຫງົບທາງຈິດໃຈ, ບໍ່ໃຫ້ກັງວົນເກີດເຫດ ເນື່ອງຈາກປັດຈຸບັນ ມີຈຳນວນຄົນຕິດເຊື້ອຫຼາຍ ທີ່ຈະຕ້ອງໄດ້ຮັບການປິ່ນປົວ. ດັ່ງນັ້ນ, ທາງທີມງານແພດເຮົາ ກໍ່ຈະຕ້ອງໄດ້ປະສານງານກັບສະຖານທີ່ຕ່າງໆ ເພື່ອຮັບຄົນເຈັບເຂົ້ານອນ, ພ້ອມດຽວກັນນັ້ນ ກໍ່ຮັບປະກັນບໍ່ໃຫ້ມີການຕິດເຊື້ອໃສ່ບຸກຄະລາກອນແພດ. ດັ່ງນັ້ນ, ແມ່ນໃຫ້ທ່ານສືບຕໍ່ຈຳກັດບໍລິເວນຢ່າງເຄັ່ງຄັດ ຈົນກວ່າຈະມີທີມງານແພດມາຮັບທ່ານຢູ່ເຮືອນ;

- ສໍາລັບ ທ່ານທີ່ເປັນຜູ້ສໍາຜັດໃກ້ຊິດ ເຖິງຜົນກວດອອກມາບໍ່ພົບເຊື້ອກໍ່ຕາມ ຍັງຈໍາເປັນຕ້ອງຈໍາກັດບໍລິເວນຕົນເອງຈົນຄົບ 14 ວັນ, ຖ້າຫາກທ່ານຮູ້ສຶກບໍ່ສະບາຍໃຫ້ໂທປຶກສາສາຍດ່ວນ ທັນທີ ຫຼື ໄປສະຖານບໍລິການສາທາລະນະສຸກທີ່ໃກ້ທີ່ສຸດ. ໝັ່ນຕິດຕາມອຸນຫະພູມຂອງຕົນເອງ, ຖ້າມີອາການໄຂ້, ໄອ, ດັງບໍ່ໄດ້ກິ່ນ, ຫາຍໃຈຍາກ ແມ່ນໃຫ້ໂທສອບຖາມສາຍດ່ວນ 165/166 ຫຼື ໄປພົບແພດທັນທີ;
- ບັນຫາສໍາຄັນ ປັດຈຸບັນ ສັງເກດເຫັນວ່າ ມີກຸ່ມຄົນເປັນຈໍານວນໜຶ່ງ ຍັງອອກໄປເຄື່ອນໄຫວກິດຈະກໍາຢູ່ນອກບ້ານ ໂດຍທີ່ບໍ່ມີຄວາມຈໍາເປັນ ເຊິ່ງທ່ານອາດນໍາເອົາຕົນເອງເຂົ້າໄປຫາຄວາມສ່ຽງໄດ້ເຊັ່ນດຽວກັນ ເພາະ ປັດຈຸບັນ ຄວາມສ່ຽງແມ່ນມີຢູ່ທຸກບ່ອນ. ສະນັ້ນ, ການລ໋ອກດາວ ປິດເມືອງ ນີ້ ກໍ່ແມ່ນເພື່ອ:

1. ປ້ອງກັນບໍ່ໃຫ້ການລະບາດແຜ່ລາມອອກສູ່ວົງກວ້າງໃນຊຸມຊົນ

2. ຮັກສາສຸຂະພາບ ແລະ ຊີວິດຂອງທ່ານ ແລະ ບໍ່ນຳເອົາເຊື້ອຈາກນອກເຮືອນເຂົ້າມາສູ່ຄອບຄົວ ໂດຍສະເພາະ ຜູ້ສູງອາຍຸ ກໍ່ຄື ພໍ່ແມ່, ພໍ່ເຖົ້າ, ແມ່ເຖົ້າ, ພໍ່ປູ່, ແມ່ຍ່າ ເຊິ່ງເຂົາເຈົ້າເຫຼົ່ານັ້ນ ສ່ວນຫຼາຍ ກໍ່ແມ່ນມີພະຍາດປະຈຳໂຕ. ດັ່ງນັ້ນ, ຈຶ່ງມີຄວາມສ່ຽງສູງຕໍ່ການຕິດເຊື້ອ, ເກີດອາການໜັກ ແລະ ເສຍຊີວິດໄດ້

3. ຫລຸດຜ່ອນຄວາມແອອັດ ຢູ່ສະຖານທີ່ຈຳກັດບໍລິເວນ ແລະ ສະຖານທີ່ປິ່ນປົວ.
   - ດັ່ງນັ້ນ, ຂ້າພະເຈົ້າຮຽກຮ້ອງໃຫ້ທຸກຄົນ ໃຫ້ຢູ່ກັບບ້ານ, ໃຫ້ຢູ່ກັບເຮືອນ, ຖ້າອອກໄປ ກໍ່ແມ່ນເພື່ອໄປຊື້ເຄື່ອງອຸປະໂພກ-ບໍລິໂພກທີ່ຈຳເປັນ, ອາດຈະ 1-2 ຄັ້ງ/ອາທິດເທົ່ານັ້ນ ຫຼື ເຈັບເປັນ ຈະຕ້ອງໄດ້ໄປຫາແພດ;

- ຖ້າທຸກພາກສ່ວນໃນສັງຄົມ ຫາກຍັງບໍ່ກັນປະຕິບັດ ມາດຕະການທີ່ຄະນະສະເພາະກິດວາງອອກ ຢ່າງເຄັ່ງຄັດ ກໍ່ຈະເຮັດໃຫ້ການລະບາດຂະຫຍາຍສູ່ວົງກວ້າງ, ແກ່ຍາວ, ຈະກັບມາຫາທ່ານເອງ ແລະ ຄົນໃນຄອບຄົວ ແລະ ໂອກາດທີ່ຈະກັບຄືນມາໃຊ້ມາດຕະການຜ່ອນຜັນ ກໍ່ຈະແກ່ຍາວໄປອີກ ເຊິ່ງເປັນສິ່ງທີ່ທຸກຄົນບໍ່ເພິ່ງປາດຖະໜາ;

- ເພື່ອຊອກຄົ້ນຫາພະຍາດໃຫ້ໄດ້ໄວທີ່ສຸດ, ກະຊວງສາທາລະນະສຸກ ຈຶ່ງໄດ້ອະນຸມັດໃຫ້ນຳໃຊ້ **ຊຸດກວດແບບໄວ**, ໂດຍໄດ້ນຳໃຊ້ຕາມທີ່ອີງການອະນາໄມໂລກຮອງຮັບໃນເຫດການພາວະສຸກເສີນເທົ່ານັ້ນ ແລະ ໃຊ້ສະເພາະໃນສະຖານທີ່ບໍລິການສາທາລະນະສຸກ ທີ່ແພດໄດ້ຮັບການຝຶກອົບຮົມ. ປັດຈຸບັນ ມີຫຼາຍພາກສ່ວນ ໄດ້ສວຍໂອກາດ ອອກມາໂຄສະນາຂາຍ ໂດຍສະເພາະໃນສື່ສັງຄົມອອນລາຍຕ່າງໆ,

ເຊິ່ງການນຳໃຊ້ນັ້ນ ຕ້ອງໄດ້ຄຳນຶງເຖິງຄຸນນະພາບ ແລະ ປະສິດຕິພາບ ອີກດ້ວຍ ເພາະອາດຈະໃຫ້ຜົນລົບປອມໄດ້. ພ້ອມດຽວກັນນັ້ນ ການນຳໃຊ້ຊຸດເຄື່ອງກວດ ທີ່ບໍ່ໄດ້ຮັບການອະນຸມັດຈາກກະຊວງສາທາລະນະສຸກ ຖືວ່າ ເປັນການກະທຳທີ່ຜິດຕໍ່ລະບຽບກົດໝາຍ ເພາະ ຊຸດກວດທີ່ນຳມາຂາຍອາດເປັນຂອງປອມ, ບໍ່ໄດ້ມາດຕາຖານ ແລະ ທີ່ສຳຄັນທີ່ສຸດ ການເກັບມ້ຽນສິ່ງເສດເຫຼືອ-ຂີ້ເຫຍື້ອ ຈາກການນຳໃຊ້ຊຸດກວດແບບໄວ້ນີ້ ແມ່ນຕ້ອງໄດ້ປະຕິບັດຢ່າງເຄັ່ງຄັດ ຖ້າເຮັດບໍ່ຖືກຕ້ອງມັນຈະແຜ່ເຊື້ອໄປສູ່ຄົນອ້ອມຂ້າງຕື່ມອີກ;

- ອີກວິທີນຶ່ງດີທີ່ສຸດ ຄຽງຄູ່ກັບການປະຕິບັດມາດຕະການປ້ອງກັນການຕິດເຊື້ອນັ້ນ ກໍ່ຄື ການໄດ້ຮັບວັກຊີນ ເພື່ອສ້າງພູມຄຸມໃຫ້ແກ່ຕົວທ່ານເອງ ກໍ່ຄື ພູມຄຸ້ມກັນໝູ່, ສາມາດຊ່ວຍຫຼຸດຜ່ອນຄວາມຮຸນແຮງຂອງການເຈັບເປັນ ແລະ ການເສຍຊີວິດ.

- ການສັກວັກຊິນ ແມ່ນໄດ້ສືບຕໍ່ໃຫ້ບໍລິການ ຈຸດທີ 1) ຢູ່ ສູນການຄ້າລາວໄອເຕັກ, 2) ໂຮງໜໍເມືອງ 9 ຕົວເມືອງ, 3) ຢູ່ວັດຈີນ ບ້ານດົງປາແລບ (ຈັນ ເຖິງ ສຸກ) ແລະ ຍັງມີທີມເຄື່ອນທີ່ໃຫ້ບໍລິການໃນເຂດທີ່ມີການລະບາດ. ມາຮອດປະຈຸບັນທົ່ວປະເທດແມ່ນສາມາດວັກວັກຊີນໄດ້:
    - ເຂັມທີ 1 ໄດ້: 2,929,620 ເຂັມ ອັດຕາປົກຄຸມ 39.92 %
    - ທຸກເຂັມທີ່ແນະນໍາ ໄດ້: 2,012,302 ອັດຕາປົກຄຸມ 27.42 %
- ຂໍຮຽກຮ້ອງມາຍັງ ພໍ່ແມ່, ພີ່ນ້ອງ, ປະຊາຊົນ ແລະ ທຸກພາກສ່ວນໃນສັງຄົມ ຈົ່ງພ້ອມໃຈກັນ ປະຕິບັດການດໍາລົງຊີວິດປົກກະຕິແບບໃໝ່ (new normal) ແລະ ພວກເຮົາທຸກຄົນ ຕ້ອງຮ່ວມແຮງຮ່ວມໃຈ ສາມັກຄີກັນ ຢູ່ບ້ານເພື່ອຊາດ ພ້ອມກັນ

ຜ່ານຜ່າວິກິດນີ້ໄປດ້ວຍກັນ ແລະ ສາມາດກັບມາດຳລົງຊີວິດປົກກະຕິໂດຍໄວ

ພ້ອມກັນຜ່ານຜ່າວິກິດການລະບາດຂອງພະຍາດ COVID-19 ໄປດ້ວຍດີ.

**ມາຮອດນີ້ ການລາຍງານສະພາບພະຍາດ ໂຄວິດ-19 ປະຈຳວັນຈັນ ວັນທີ 27 ກັນຍາ ປີ 2021 ຂອງພວກຂ້າພະເຈົ້າ ໄດ້ສິ້ນສຸດພຽງເທົ່ານີ້, ຂໍສະແດງຄວາມຂອບໃຈມາຍັງບັນດາທ່ານ ທີ່ໄດ້ຕິດຕາມຮັບຟັງ ແລະ ຮັບຊົມ.**

**(ຂໍຂອບໃຈ)**